ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສະຫະພັນກຳມະບານ ທຫລ ປາຖະກະຖາເນື່ອງໃນ ວັນສ້າງຕັ້ງກຳມະບານລາວ ຄົບຮອບ 65 ປີ




ໃນຕອນບ່າຍຂອງວັນທີ 10 ມີນາ 2021 ທີ່ສະໂມສອນສະຖາບັນການທະນາຄານ, ນະຄອນຫລວງວຽງຈັນໄດ້ຈັດພິທີປາຖະກະຖາເລົ່າມູນເຊື້ອວັນສ້າງຕັ້ງກຳມະບານລາວຄົບຮອບ 65 ປີ (1/2/1956-1/2/2021) ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນກຳມະບານລາວທົ່ວປະເທດຄັ້ງທີ VIII ພາຍໃຕ້ການເປັນປະທານຂອງສະຫາຍນາງ ຂັນແກ້ວ ຫຼ້າມະນີເງົາ ກຳມະການປະຈຳພັກ ທຫລ, ປະທານສະຫະພັນກຳມະບານ ທຫລ ແລະ ໃຫ້ກຽດເຜີຍແຜ່ໂດຍສະຫາຍ ນາງ ອາລີ ວົງໜໍ່ບຸນທຳ ກຳມະການສູນກາງພັກ, ປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ໂດຍມີສະມາຊິກກຳມະບານໃນຂະແໜງການທະນາຄານເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານປະທານໄດ້ໃຫ້ຮູ້ຈຸດປະສົງຂອງພິທີໃນຄັ້ງນີ້ວ່າ: ເພື່ອແນໃສ່ເຮັດໃຫ້ຖັນແຖວສະມາຊິກກຳມະບານຂອງມີຄວາມຮັບຮູ້-ເຂົ້າໃຈຢ່າງເລິກເຊິ່ງ ແລະ ພ້ອມກັນເຊື່ອມຊຶມ-ກຳແໜ້ນເນື້ອໃນຂອງບາງເອກະສານສຳຄັນເຊັ່ນ: ເອກະສານມູນເຊື້ອການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງກຳມະບານລາວ ຄົບຮອບ 65 ປີ (1 ກຸມພາ 1956 – 1 ກຸມພາ 2021); ເອກະສານມະຕິກອງປະຊຸມໃຫຍ່ຜູ້ແທນກຳມະບານລາວ ທົ່ວປະເທດ ຄັ້ງທີ VIII; ເອກະສານການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາວຽກງານກຳມະບານລາວ 5 ປີ ຄັ້ງທີ III (2015-2020) ແລະ ແຜນພັດທະນາວຽກງານກຳມະບານລາວ 5 ປີ ຄັ້ງທີ IV (2021-2025) ແລະ ກົດລະບຽບຂອງສະຫະພັນກຳມະບານລາວ ສະໄໝທີ VIII.

ພາຍຫລັງໄດ້ຮັບຟັງເອກະສານທັງຫມົດ, ທ່ານປະທານໄດ້ເນັ້ນໃຫ້ແຕ່ລະຮາກຖານກໍຄືສະມາຊິກກຳມະບານທຸກສະຫາຍຈົ່ງຕັ້ງໜ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນກຳມະບານລາວ ທົ່ວປະເທດ ຄັ້ງທີ VIII ແລະ ແຜນພັດທະນາວຽກງານກຳມະບານລາວ 5 ປີ ຄັ້ງທີ IV (2021-2025) ໃນຂະແໜງການທະນາຄານຢ່າງເປັນຮູບປະທຳ; ພິທີດັ່ງກ່າວໄດ້ດຳເນີນມາເປັນເວລາເຄິ່ງວັນຢ່າງມີເນື້ອໃນອັນເລິກເຊິ່ງ ແລະ ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມຕາມລະດັບຄາດໝາຍໃນວັນດຽວກັນນັ້ນ.

**# ຂ່າວ: ສະຫະພັນກຳມະບານ ທຫລ.**

**# ພາບ: ສົມພິດ ທຳມະວົງ.**

## ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ